**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ 53 /ສພຂ.ຊຍ
ໄຊຍະບູລີ, ວັນທີ 23 ກໍລະກົດ 2025

# ມະຕິ
## ກອງປະຊຸມສະພາປະຊາຊົນແຂວງ
## ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ
## ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ
## ໃນໄລຍະ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2025

- ອີງຕາມ ມາດຕາ 78 ຂອງ ລັດຖະທຳມະນູນແຫ່ງ ສປປ ລາວ ສະບັບປັບປຸງ ປີ 2025;
- ອີງຕາມ ມາດຕາ 60 ຂອງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020;
- ອີງຕາມ ບົດລາຍງານຂອງອົງການປົກຄອງແຂວງ ໃນກອງປະຊຸມສະໄໝສາມັນ ເທື່ອທີ 9 ຂອງສະພາປະຊາຊົນແຂວງ ຊຸດທີ II.

ຜ່ານການຮັບຟັງການລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ໃນໄລຍະ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2025; ການປະກອບຄຳເຫັນຂອງ ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ໃນວາລະກອງປະຊຸມສະໄໝສາມັນ ເທື່ອທີ 9 ຂອງສະພາປະຊາຊົນແຂວງ ຊຸດທີ II.

## ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາການສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ໄລຍະ 6 ເດືອນຕົ້ນປີ 2025.**

ກອງປະຊຸມສະພາປະຊາຊົນແຂວງ ສະແດງຄວາມຊົມເຊີຍ ຕໍ່ອົງການປົກຄອງແຂວງ ທີ່ໄດ້ພະຍາຍາມສູ້ຊົນຜ່ານຜ່າອຸປະສັກ ແລະ ສິ່ງທ້າທາຍ ຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ໃນໄລຍະ 6 ເດືອນຕົ້ນປີ 2025 ມີຄວາມຄືບໜ້າຫຼາຍດາດໝາຍ ຕາມມະຕິກອງປະຊຸມສະພາປະຊາຊົນແຂວງຮັບຮອງ, ຊຶ່ງສະແດງອອກດັ່ງນີ້:

1. ຮັກສາໄດ້ສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບໂດຍພື້ນຖານ, ເສດຖະກິດ-ສັງຄົມ ໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ, ຮອດທ້າຍປີ 2025 ຄາດວ່າເສດຖະກິດຈະຂະຫຍາຍຕົວບັນລຸຕາມແຜນທີ່ກຳນົດໄວ້ 5% ລວມຍອດຜະລິດຕະພັນພາຍໃນ ບັນລຸໄດ້ 25,960 ຕື້ກີບ;

2. ການປະຕິບັດແຜນລາຍຮັບງົບປະມານ: ປະຕິບັດໄດ້ 1,547.97 ຕື້ກີບ ເທົ່າກັບ 56.97% ຂອງມະຕິ, ໃນນັ້ນ:
   - ລາຍຮັບພູດສູນກາງ: ປະຕິບັດໄດ້ 669.51 ຕື້ກີບ, ເທົ່າກັບ 49.04% ຂອງມະຕິ;
   - ລາຍຮັບພາຍໃນແຂວງ: ປະຕິບັດໄດ້ 878.46 ຕື້ກີບ, ເທົ່າກັບ 62.74% ຂອງມະຕິ.
3. ການປະຕິບັດແຜນລາຍຈ່າຍງົບປະມານ: ປະຕິບັດໄດ້ 445.97 ຕື້ກີບ, ເທົ່າກັບ 59.13% ຂອງມະຕິ;
4. ການລະດົມແຫຼ່ງທຶນເພື່ອການພັດທະນາ ໃນ 6 ເດືອນຕົ້ນປີ 2025: ປະຕິບັດໄດ້ທັງໝົດ 3,574.54 ຕື້ກີບ, ເທົ່າກັບ 68.85% ຂອງຄາດໝາຍຕາມມະຕິ (ມະຕິ 5.192 ຕື້ກີບ), ໃນນັ້ນ:
   - ການລົງທຶນຂອງລັດ ປະຕິບັດໄດ້ 219.69 ຕື້ກີບ, ເທົ່າກັບ 82.63% ຂອງມະຕິ;
   - ການດຶງດູດທຶນຊ່ວຍເຫຼືອລ້າປະຕິບັດໄດ້ 43.40 ຕື້ກີບ, ເທົ່າກັບ 8.35% ຂອງມະຕິ;
   - ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດປະຕິບັດໄດ້ 1,858.75 ຕື້ກີບ, ເທົ່າກັບ 59.67% ຂອງມະຕິ;
   - ການລະດົມສິນເຊື່ອປະຕິບັດໄດ້ 1,452.7 ຕື້ກີບ, ກວມ 112% ຂອງມະຕິ.
5. ດ້ານການຄ້າ: ການສົ່ງອອກສິນຄ້າປະຕິບັດໄດ້ 103 ລ້ານໂດລາສະຫະລັດ, ເທົ່າກັບ 101.79% ຂອງມະຕິ; ການນຳເຂົ້າປະຕິບັດໄດ້ 52 ລ້ານໂດລາສະຫະລັດ, ເທົ່າກັບ 86.05% ຂອງມະຕິ;
6. ການຈັດຕັ້ງປະຕິບັດຄາດໝາຍທີ່ມີຄວາມຄືບໜ້າ ເປັນຕົ້ນ: ດ້ານການຜະລິດ, ການປຸງແຕ່ງ, ການຄ້າ-ການບໍລິການ, ການທ່ອງທ່ຽວ, ສິນເຊື່ອທະນາຄານ, ການຄຸ້ມຄອງບໍລິຫານລັດ ແລະ ອື່ນໆ;
7. ການຈັດຕັ້ງປະຕິບັດບັນດາຄາດໝາຍວັດທະນະທຳສັງຄົມ, ພັດທະນາຊົນນະບົດ ມີທັງໝົດ 50 ຄາດໝາຍໃນນີ້: ສາມາດບັນລຸຕາມແຜນການ 22 ຄາດໝາຍ, ບໍ່ສາມາດບັນລຸ 28 ຄາດໝາຍ (ແຕ່ລະຄາດໝາຍລາຍລະອຽດມີເອກະສານຊ້ອນທ້າຍ 01).

ໄປຄຽງຄູ່ກັບບັນດາຄາດໝາຍທີ່ມີຄວາມຄືບໜ້າດັ່ງກ່າວ, ກອງປະຊຸມເຫັນວ່າ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ໄລຍະ 6 ເດືອນຕົ້ນປີ ຍັງມີຂໍ້ຄົງຄ້າງຈຳນວນໜຶ່ງ ທີ່ຕ້ອງໄດ້ສືບຕໍ່ແກ້ໄຂ ດັ່ງນີ້:

1. ການຈັດຕັ້ງປະຕິບັດຄາດໝາຍແຜນປີ 2025 ຍັງມີຄວາມຄືບໜ້າໜ້ອຍ ເປັນຕົ້ນ:
   1) ການເກັບລາຍຮັບ ເຖິງແມ່ນວ່າປະຕິບັດໄດ້ 56.97% ຂອງແຜນການປີ, ແຕ່ເຫັນວ່າພູດສູນກາງຍັງປະຕິບັດໄດ້ໜ້ອຍ ຄາດວ່າຈະບໍ່ບັນລຸຄາດໝາຍ, ຍ້ອນມາດຕະການ ການຕິດຕາມຊຸກຍູ້ຍັງບໍ່ທັນແຂງແຮງ;
   2) ການປະຕິບັດແຜນລາຍຈ່າຍລວມ ເຖິງວ່າປະຕິບັດໄດ້ 59.13% ແຕ່ການຊຳລະໜີ້ສິນໂຄງການການລົງທຶນ, ການກໍ່ສ້າງສ້ອມແປງໂຄງລ່າງ, ເສັ້ນທາງຫຼວງແຫ່ງຊາດ ແລະ ທ້ອງຖິ່ນຍັງຊັກຊ້າເຮັດໃຫ້ການສັນຈອນພົບຄວາມຫຍຸ້ງຍາກ;
   3) ການຄຸ້ມຄອງໄພເງິນເຟີ້, ຄ່າເງິນກີບແຂງໂຕຂຶ້ນ ທຽບໃສ່ຕະກຸນເງິນບາດ ແລະ ໂດລາ, ແຕ່ລາຄາສິນຄ້າອຸປະໂພກ ແລະ ບໍລິໂພກ, ນ້ຳມັນເຊື້ອໄຟມີທ່າອ່ຽງເພີ່ມຂຶ້ນ, ກະທົບຕໍ່ຊີວິດການ ເປັນຢູ່ຂອງປະຊາຊົນ;
   4) ການຈັດຕັ້ງປະຕິບັດຄາດໝາຍໃນຂົງເຂດວັດທະນະທຳ-ສັງຄົມ ບໍ່ບັນລຸ 28 ຄາດໝາຍ ເປັນຕົ້ນບາງຕົວເລກໃນຂົງເຂດສຶກສາ, ສາທາ, ແຮງງານ ແລະ ການປະຕິບັດຕົວເລກພັດທະນາຊົນນະບົດ ລຶບລ້າງ ຄວາມທຸກຍາກ ແລະ ອື່ນໆ ບໍ່ບັນລຸຕາມແຜນທີ່ກຳນົດໄວ້.
2. ການປະຕິບັດວຽກງານຈຸດສຸມ ແລະ ບາງມາດຕະການຕິດພັນກັບວາລະແຫ່ງຊາດກ່ຽວກັບແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ທີ່ໄດ້ກຳນົດໄວ້ໃນມະຕິ ເຫັນວ່າຍັງບໍ່ທັນມີຄວາມຄືບໜ້າ ເປັນຕົ້ນ:

- ການຈັດຕັ້ງປະຕິບັດວຽກຈຸດສຸມ, ການຜະລິດເພື່ອທົດແທນການນໍາເຂົ້າສິນຄ້າທີ່ບໍ່ຈໍາເປັນ ຈໍານວນ 137 ລາຍການ ເຖິງວ່າເຮັດໄດ້ດີ ແຕ່ຍັງບໍ່ທັນຮັດກຸມ ຍັງມີການລັກລອບນໍາເຂົ້າຢູ່;
- ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍຍັງບໍ່ທັນເຂັ້ມງວດ, ຍັງມີປະຊາຊົນຈໍານວນໜຶ່ງຂາດສະຕິຕໍ່ການເຄົາລົບກົດໝາຍ, ເຮັດໃຫ້ເກີດມີປະກົດການຫຍໍ້ທໍ້ ເປັນຕົ້ນ: ບັນຫາຢາເສບຕິດ, ລັກຊັບພົນລະເມືອງ, ອຸປະຕິເຫດຕາມທ້ອງຖະໜົນ, ຄ້າຂາຍເຖື່ອນ, ການລັກລອບນໍາເຂົ້າພາຫະນະບໍ່ຖືກຕ້ອງ ບັນຫາໄວໜຸ່ມ-ຊາວໜຸ່ມມົ້ວສຸມສິ່ງເສບຕິດ ໂດຍສະເພາະດື່ມນໍ້າກະທ່ອມ, ຄໍລາເຈນ, ຢາສູບໄຟຟ້າ ແລະ ບັນຫາໂຄສະນາຊວນເຊື່ອທາງສາສະໜາ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ອື່ນໆ.

**ມາດຕາ 2 ຮັບຮອງເອົາ ທິດທາງແຜນວຽກຈຸດສຸມ ແລະ ມາດຕະການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ 6 ເດືອນທ້າຍປີ 2025**

ກອງປະຊຸມເຫັນດີເປັນເອກະພາບຕໍ່ ທິດທາງແຜນວຽກຈຸດສຸມ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ 6 ເດືອນທ້າຍປີ 2025 ແລະ ມາດຕາການຈັດຕັ້ງປະຕິບັດ ຕາມການສະເໜີຂອງອົງການປົກຄອງແຂວງ.

ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດທິດທາງແຜນການ 6 ເດືອນທ້າຍປີ ໃຫ້ບັນລຸຕາມແຜນການ, ກອງປະຊຸມສະເໜີໃຫ້ອົງການປົກຄອງແຂວງ ເອົາໃຈໃສ່ບາງວຽກຈຸມສຸມ ແລະ ມາດຕາການເພີ່ມເຕີມ ດັ່ງນີ້:

1. ຮັບປະກັນໃຫ້ແຂວງມີສະຖຽນລະພາບທາງດ້ານການເມືອງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ ເສດຖະກິດສືບຕໍ່ຂະຫຍາຍຕົວບັນລຸຕາມຄາດໝາຍທີ່ສະພາໄດ້ຮັບຮອງ.
2. ສືບຕໍ່ຈັດຕັ້ງຜັນຂະຫຍາຍ ມະຕິ 04/ກມສພ, ຄໍາສັ່ງ ເລກທີ 01/ຄພຂ.ຊຍ ຂອງຄະນະປະຈໍາພັກແຂວງ ວ່າດ້ວຍການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່ ຕິດພັນກັບການແກ້ໄຂບັນຫາເຄັ່ງຮ້ອນ ທາງດ້ານເສດຖະກິດ - ການເງິນໃຫ້ເປັນຮູບປະທໍາ, ຖືເປັນຄວາມຮັບຜິດຊອບຂອງຄະນະພັກ -ຄະນະນໍາແຕ່ລະຂັ້ນ ແລະ ເປັນຄວາມຮັບຜິດຊອບຂອງທົ່ວປວງຊົນ.
3. ສືບຕໍ່ຈັດຕັ້ງປະຕິບັດບັນດາຄາດໝາຍ, ແຜນວຽກຈຸດສຸມ ແລະ ມາດຕະການຈັດຕັ້ງປະຕິບັດ ຕາມມະຕິກອງປະຊຸມສະພາປະຊາຊົນແຂວງ ສະບັບເລກທີ 158 ແລະ 159/ສພຂ.ຊຍ, ລົງວັນທີ 30 ທັນວາ 2024 ໃຫ້ບັນລຸບັນດາຄາດໝາຍຕ່າງໆ ດັ່ງນີ້:
   (1) ສູ້ຊົນເຮັດໃຫ້ເຮັດໃຫ້ເສດຖະກິດຂອງຂະຫຍາຍຕົວຢູ່ໃນລະດັບບໍ່ໃຫ້ຫຼຸດ 5% ແລະ ລວມຍອດຜະລິດຕະພັນພາຍໃນ 25,960 ຕື້ກີບ, ສະເລ່ຍຕໍ່ຫົວຄົນໃຫ້ໄດ້ 59 ລ້ານກີບ ໃນນີ້:

   + ຂະແໜງກະສິກໍາ ຂະຫຍາຍຕົວ ໃຫ້ໄດ້ 4.4% ກວມເອົາ 57%;
   + ຂະແໜງອຸດສາຫະກໍາຂະຫຍາຍຕົວ ໃຫ້ໄດ້ 6% ກວມເອົາ 23%;
   + ການບໍລິການຂະຫຍາຍຕົວ ໃຫ້ໄດ້ 6.2% ກວມເອົາ 20%;
   + ພາສີອາກອນ ຂະຫຍາຍຕົວ 1.9% ກວມເອົາ 0.4%.

   (2) ດ້ານງົບປະມານ: ສູ້ຊົນເກັບລາຍຮັບໃຫ້ໄດ້ 1,251.1 ຕື້ກີບ, (ຄາດຄະເນໝົດປີ 2,799.07 ຕື້ກີບ) ໃນນີ້: ລາຍຮັບພູດສູນກາງ: ໃຫ້ໄດ້ 695.69 ຕື້ກີບ, (ຄາດຄະເນໝົດປີ 1,365.20 ຕື້ກວ່າກີບ) ແລະ ລາຍຮັບພູດທ້ອງຖິ່ນ: ໃຫ້ໄດ້ 565.41 ຕື້ກີບ, (ຄາດຄະເນໝົດປີ 1,443.87 ຕື້ກີບ);

   + ຄຸ້ມຄອງລາຍຈ່າຍ: ໃຫ້ໄດ້ 530.99 ຕື້ກີບ, (ຄາດຄະເນໝົດປີ 985.96 ຕື້ກີບ);
   + ດຸນດ່ຽງງົບປະມານ: ເກີນດຸນງົບປະມານ 654.95 ຕື້ກີບ (ດຸນໃຫ້ສູນກາງ).

(3) ຄາດໝາຍທຶນເພື່ອການພັດທະນາ: ສູ້ຊົນລະດົມທຶນເພື່ອພັດທະນາ ໃຫ້ກວມເອົາ 20% ຂອງ GDP ຫຼື ເທົ່າກັບ 5,192 ຕື້ກີບ ໃນນີ້:

+ ການລົງທຶນຂອງລັດ ກວມເອົາ 5%, ເທົ່າກັບ 259.6 ຕື້ກີບ;

+ ການລົງທຶນຊ່ວຍເຫຼືອລ້າ ແລະ ກູ້ຢືມກວມເອົາ 10%, ເທົ່າກັບ 519.2 ຕື້ກີບ;

+ ການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດກວມເອົາ 60%, ເທົ່າກັບ 3,115 ຕື້ກີບ;

+ ການປ່ອຍສິນເຊື່ອທະນາຄານກວມເອົາ 25%, ເທົ່າກັບ 1,298 ຕື້ກີບ.

4. ສຸມໃສ່ປະຕິບັດຄາດໝາຍໃນຂົງເຂດວັດທະນະທຳ-ສັງຄົມ ທີ່ຍັງມີຄວາມຄືບໜ້າໜ້ອຍ ໃຫ້ບັນລຸຕາມແຜນ ເປັນຕົ້ນ ອັດຕາເຂົ້າຮຽນໃໝ່ລວມ ປ1, ປ5 ແລະ ມ4, ອັດຕາປະລະຊັ້ນມັດທະຍົມຕົ້ນ ໃນນີ້ໃຫ້ເອົາໃຈໃສ່ຄົ້ນຄວ້າໂຮມບັນດາໂຮງຮຽນທີ່ມີເງື່ອນໄຂ, ຊຸກຍູ້ອົບຮົມຄູສອນ ລວມເຖິງການປຸກລະດົມນັກຮຽນໃນຊັ້ນຕ່າງໆ ເຂົ້າຮຽນໃຫ້ໄດ້ຕາມແຜນການ ແນໃສ່ກະກຽມໄຂສົກຮຽນໃໝ່ 2025-2026 ໃຫ້ທ່ວງທັນເວລາ, ສຸມໃສ່ປະຕິບັດອັດຕາການເກີດລູກມີແພດຊ່ວຍ, ອັດຕາການສັກຢາກັນພະຍາດຂອງເດັກລຸ່ມ 1 ປີ, ການພັດທະນາສີມືແຮງງານລາວ, ການຈັດຫາງານ, ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃຫ້ມີຄວາມຄືບໜ້າ ແລະ ບັນລຸຄາດໝາຍຕາມມະຕິສະພາ; ເອົາໃຈໃສ່ຄຸ້ມຄອງການທ່ອງທ່ຽວໃຫ້ເຂົ້າສູ່ລະບົບ; ຕິດຕາມ, ເຝົ້າລະວັງ ແລະ ກຽມພ້ອມຮັບມືກັບເຫດການ ແລະ ຜົນກະທົບທີ່ຈະເກີດຂຶ້ນ ເປັນຕົ້ນ: ໄພທຳມະຊາດ, ພະຍາດລະບາດຕາມລະດູການ;

5. ເອົາໃຈໃສ່ຄຸ້ມຄອງ, ປົກປັກຮັກສາປ່າໄມ້ ຕາມຄຳສັ່ງເລກທີ 11/ນຍ ແລະ ເລກທີ 110/ຈຂ.ຊຍ ໃຫ້ເຂັ້ມງວດ; ກວດກາ ແລະ ປະເມີນບັນດາໂຄງການເຊົ່າ, ສຳປະທານທີ່ດິນຂອງລັດ ແລະ ປະຕິບັດມາດຕະການຢ່າງເຂັ້ມງວດ ຕໍ່ໂຄງການທີ່ບໍ່ປະຕິບັດພັນທະຕາມສັນຍາ ແລະ ກົດໝາຍ; ສືບຕໍ່ຊຸກຍູ້ຂະຫຍາຍ ແລະ ປະຕິບັດແປນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແບະ ສິ່ງແວດລ້ອມແບບຮອບດ້ານຂອງແຂວງ ໃຫ້ເປັນແນຈັດສັນທີ່ດິນຂັ້ນເມືອງ ແລະ ຂັ້ນບ້ານໃຫ້ຫຼາຍຂຶ້ນ ພ້ອມທັງປົກປັກຮັກສາສິ່ງແວດລ້ອມທາງທຳມະຊາດ ແລະ ສັງຄົມ;

6. ສືບຕໍ່ຊຸກຍູ້ສົ່ງເສີມການຜະລິດໃຫ້ຫຼາຍຂຶ້ນ ແລະ ຫັນເປັນທັນສະໄໝ ເພື່ອຍົກລະດັບຜົນຜະລິດທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ (ຂະແໜງການທີ່ແຂວງມີທ່າແຮງ), ເອົາໃຈໃສ່ຄຸ້ມຄອງການນຳເຂົ້າ-ສົ່ງອອກ ຕິດພັນກັບການຄຸ້ມຄອງເງິນຕາ ໃຫ້ເຂົ້າສູ່ລະບົບໃຫ້ຫຼາຍຂຶ້ນ, ຈຳກັດການນຳເຂົ້າສິນຄ້າທີ່ບໍ່ຈຳເປັນ ເພື່ອຊຸກຍູ້ສົ່ງເສີມການຜະລິດພາຍໃນໃຫ້ຫຼາຍຂຶ້ນເປັນຕົ້ນ:

- ສູ້ຊົນການຄຸ້ມຄອງຈໍລະຈອນສິນຄ້າພາຍໃນໃຫ້ຂະຫຍາຍຕົວຫຼາຍຂຶ້ນ, ສູ້ຊົນສ້າງສິນຄ້າ ໜຶ່ງເມືອງໜຶ່ງຜະລິດຕະພັນ (ODOP)ໃຫ້ໄດ້ 2 ຜະລິດຕະພັນຂຶ້ນໄປ;
- ສຸມໃສ່ການຜະລິດດ້ານກະສິກຳ ເພື່ອທົດແທນການເຂົ້າໃຫ້ໄດ້ຫຼາຍຂຶ້ນ.

7. ເອົາໃຈໃສ່ປັບປຸງໂຄງລ່າງພື້ນຖານ ໂດຍສະເພາະເສັ້ນທາງຫຼວງແຫ່ງຊາດ, ເສັ້ນທາງອອກສູ່ຊາຍແດນ, ດ້ານເຈື່ອນ ແລະ ອື່ນໆ; ເອົາໃຈໃສ່ຄຸ້ມຄອງນ້ຳໜັກ, ກວດກາລົດບັນທຸກນ້ຳໜັກເກີນ ແລະ ພັດທະນາລະບົບການບໍລິການຂົນສົ່ງ, ການຄ່ຽນຖ່າຍສິນຄ້າຢູ່ຊາຍແດນ, ດ່ານສາກົນໃຫ້ມີຄວາມສະດວກດີຂຶ້ນ ເພື່ອເປັນພື້ນຖານສຳຄັນໃຫ້ແກ່ການສົ່ງເສີມການລົງທຶນ, ການຄ້າ ແລະ ການທ່ອງທ່ຽວ;

8. ເພີ່ມທະວີຄວາມສັກສິດໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ຮີບຮ້ອນແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ ເປັນຕົ້ນ ການລະເມີດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ, ການຄ້າ-ຂາຍເຖື່ອນ ບັນຫາຢາເສບຕິດ, ອຸປະຕິເຫດຕາມທ້ອງຖະໜົນ, ແກ້ໄຂຜົນການກວດສອບ-ກວດກາ ໃຫ້ໄດ້ຢ່າງຂາດຕົວ;

9. ເພີ່ມທະວີເອົາໃຈໃສ່ການ ເກັບກຳສະຖິຕິ ແລະ ສັງລວມຂໍ້ມູນ ໃຫ້ທັນເວລາ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ ເພື່ອຮັບໃຊ້ການສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດເສດຖະກິດ-ສັງຄົມ ໃນໄລຍະຜ່ານມາ ແລະ ການສ້າງແຜນໃນຕໍ່ໜ້າໃຫ້ມີຄຸນນະພາບ, ສອດຄ່ອງກັບສະພາບຕົວຈິງຂອງແຂວງ ຮັບປະກັນປະສິດທິພາບ ແລະ ປະສິດທິຜົນຂອງການພັດທະນາເສດຖະກິດ-ສັງຄົມຂອງແຂວງ;
10. ສຸມໃສ່ສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດແຜນ 5 ສົກປີ ຄັ້ງທີ VI (2021-2025) ແລະ ແຜນການປະຈຳປີ 2025 ແລະ ສືບຕໍ່ຮ່າງແຜນ 5 ປີ ຄັ້ງທີ VII (2026-2030) ແລະ ແຜນການປະຈຳປີ 2026 ໃຫ້ມີເນື້ອໃນຄົບຖ້ວນສົມບູນ ເພື່ອລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສະພາປະຊາຊົນແຂວງ ຊຸດທີ II.

**ມາດຕາ 3 ການຈັດຕັ້ງປະຕິບັດ**

1. ມອບໃຫ້ອົງການປົກຄອງແຂວງຊີ້ນຳບັນດາພະແນກການ, ອົງການລັດຂອງແຂວງ ແລະ ອົງການປົກຄອງເມືອງຈັດຕັ້ງປະຕິບັດ ມະຕິສະບັບນີ້ຢ່າງເຂັ້ມງວດ;
2. ມອບໃຫ້ ຄະນະປະຈຳສະພາປະຊາຊົນແຂວງຊີ້ນຳບັນດາຄະນະກຳມະການ ແລະ ຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ ສືບຕໍ່ຊຸກຍູ້ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

**ເພັງນິລັນ ຄຳພັນເພັງ**